ຖ້າທ່ານຕ້ອງການລາຍລະອຽດຕື່ມກ່ຽວກັບບໍລິການຊ່ວຍເຫຼືອພໍ່ແມ່ແລະຄົນໜຸ່ມເລື່ອງຢາເສບຕິດແລະເຫຼົ້າ ຂໍໃຫ້ຕິດຕໍ່ຫາສູນອະນາມັຍຊຸມຊົນຫຼືສູນສຶກສາເລື່ອງຢາເສບຕິດແລະເຫຼົ້າສຳລັບຊົນຊາດຕ່າງໆ (Drug and Alcohol Multicultural Education Centre ຫຼືເອີ້ນຫຍໍ້ວ່າ DAMEC) ເບີໂທຣ (02) 9699 3552. ອາດຈະມີຜູ້ໃຫ້ຄຳແນະນຳທີ່ເວົ້າພາສາລາວ ແຕ່ຖ້າບໍ່ມີເຂົາເຈົ້າກໍຈະຈັດຜູ້ແປພາສາໄວ້ໃຫ້. (ບໍລິການເລື່ອງໃຫ້ຄຳແນະນຳກ່ຽວ ກັບທັງເຫຼົ້າແລະຢາເສບຕິດຖືເລື່ອງທຸກຢ່າງເປັນຄວາມລັບ). ຖ້າທ່ານຕ້ອງການຢາກໄດ້ ປຶ້ມນ້ອຍທີ່ຊື່ວ່າ "ສິບຢ່າງທີ່ພໍ່ແມ່ຖາມກ່ຽວກັບຢາເສບຕິດ" (10 Questions Parents ask about Drugs) ຂໍໃຫ້ທ່ານໄປຂໍເອົາໄດ້ທີ່ສູນອະນາມັຍຊຸມຊົນ ຫຼື ທີ່ DAMEC.

<u>ຢ່າລືມວ່າ - ເປັນການຜິດກົດໝາຍທີ່ຂາຍຢາສູບໃຫ້ແກ່ຄົນທີ່ມີອາຍຸຕ່ຳກວ່າ 18 ປີ</u>
ຄົນຂາຍຢາສູບທຸກໆຄົນຕ້ອງຖາມເອົາໃບຢັ້ງຢືນອາຍຸຈາກຄົນໜຸ່ມວ່າເຂົາເຈົ້າອາຍຸ ເກີນ 18 ປີ ແລ້ວ ກ່ອນຂາຍ ຢາສູບໃຫ້. ໃບຢັ້ງຢືນນີ້ອາດແມ່ນໃບຂັບຂີ່ ພາສປອດ ຫຼືໃບຢັ້ງຢືນອາຍຸທີ່ທາງການຖນົນແລະຈາຣະຈອນ (Roads and Traffic Authority) ອອກໃຫ້. ຜູ້ໃດທີ່ຝ່າຝືນກົດໝາຍອັນນີ້ຈະຖືກປັບໄໝຮອດ $5,000. ເຫດຜົນທີ່ກົດໝາຍນີ້ອອກມາກໍເພື່ອປ້ອງກັນສຸຂພາບຂອງຄົນໜຸ່ມໂດຍການເຮັດໃຫ້ການຫາໃຊ້ຢາສູບຂອງເຂົາເຈົ້າໃຫ້ຍາກຂຶ້ນ. ຄົນໃດທີ່ເລີ້ມສູບຢາແຕ່ຍັງໜຸ່ມໆ, ຄົນນັ້ນມັກສູບຢາຕໍ່ໄປຈົນອາຍຸແກ່ຂຶ້ນ - ຄວາມຈິງທີ່ໜ້າເສົ້າໃຈກໍຄື ປະມານ 40 ເປີເຊັນຂອງຄົນທີ່ສູບຢາຕາຍຍ້ອນພຍາດທີ່ກ່ຽວຂ້ອງກັບຢາສູບ. ໃນຂນະດຽວກັນ ຄົນໜຸ່ມທີ່ຫຼີກເວັ້ນການສູບຢາກ່ອນອາຍຸ 18 ປີ ສ່ວນຫຼາຍບໍ່ຄ່ອຍກາຍເປັນຄົນສູບຢາໃນພາຍຫຼັງ.

| |
|---|
| ເບີໂທຣະສັບເຫຼົ່ານີ້ ແມ່ນຖືກຕ້ອງໃນເວລາທີ່ພິມເອກກະສານນີ້ ແຕ່ວ່າອາດມີການປ່ຽນແປງ. ທ່ານອາດຈະຕ້ອງໄດ້ກວດເບິ່ງເລກໂທຣໃນສມຸດໂທຣະສັບເບິ່ງໃໝ່. |


**NSW Multicultural Health Communication Service**
Website: http://mhcs.health.nsw.gov.au
e-mail: mhcs@sesahs.nsw.gov.au



multicultural communication

Laotian
7 April 1997
[BHC-3095]


# What Should You Do if you Think Your Child is Using Illegal Drugs?

# ຈະເຮັດຢ່າງໃດຖ້າທ່ານຄຶດວ່າ ລູກໃຊ້ຢາເສບຕິດ ຊນິດຜິດກົດໝາຍ?


REVIEWED November 2004
NSWMulticulturalHealthCommunicationService

NSW HEALTH DEPARTMENT

## What Should You Do if you Think Your Child is Using Illegal Drugs?
## ຈະເຮັດຢ່າງໃດຖ້າທ່ານຄຶດວ່າລູກໃຊ້ຢາເສບຕິດຊະນິດຜິດກົດໝາຍ?

ພໍ່ແມ່ຄວນຈະເຮັດຢ່າງໃດຖ້າສົງສັຍວ່າລູກຂອງຕົນໃຊ້ຢາເສບຕິດ? ເຖິງວ່າຈະເປັນເຣື່ອງທັມມະດາຢູ່ເອງທີ່ພໍ່ແມ່ຈະຕ້ອງຮູ້ສຶກໃຈຮ້າຍແລະຂູ່ວ່າຈະທຳໂທດລູກ, ແຕ່ປະຕິກິຣິຍາດັ່ງກ່າວອາດເຮັດເຫດການຕ່າງໆເລວຮ້າຍລົງໄດ້. ມີເຫດຜົນທີ່ດີໃນການອະທິບາຍເຣື່ອງນີ້. ຄົນໜຸ່ມຕ້ອງການຢາກຮູ້ວ່າພໍ່ແມ່ຮັກເຂົາເຈົ້າແລະຢາກໃຫ້ພໍ່ແມ່ຊ່ວຍເມື່ອເຂົາເຈົ້າມີບັນຫາ- ຄວາມໂມໂຫໂຫໂສແລະການຂົ່ມຂູ່ອາດເຮັດໃຫ້ລູກເກີດຄວາມຢ້ານຈົນຂາດຄວາມ ເຊື່ອໃຈໃນຕົວພໍ່ແມ່ເມື່ອເຂົາເຈົ້າມີບັນຫາ. ການທີ່ຄົນໜຸ່ມທົດລອງໃຊ້ຢາເສບຕິດຜິດກົດໝາຍອາດໝາຍຄວາມວ່າເຂົາເຈົ້າມີບັນຫາຢ່າງໃດຢ່າງນຶ່ງແລ້ວ.

ສິ່ງທຳອິດທີ່ຕ້ອງເຮັດກໍຄື ຕ້ອງພຍາຍາມຕັ້ງອົກຕັ້ງໃຈໃຫ້ດີແລະບໍ່ຕິຕົນເອງວ່າເປັນພໍ່ແມ່ທີ່ໃຊ້ການບໍ່ໄດ້ຍ້ອນເຫດການດັ່ງກ່າວເກີດຂຶ້ນກັບຄອບຄົວຂອງຕົນ. ບັນຫາເຊັ່ນນີ້ເກີດຂຶ້ນໄດ້ກັບຄອບຄົວທຸກແບບທຸກຊະນິດ. ສິ່ງຕໍ່ໄປທີ່ຄວນເຮັດກໍຄືຕ້ອງໄດ້ຮຽນຮູ້ວ່າຢາເສບຕິດມີຜົນຢ່າງໃດແດ່ຕໍ່ສຸຂພາບ. ທ່ານສາມາດຮູ້ເຣື່ອງນີ້ໄດ້ໂດຍການໂທຣະສັບຫາໜ່ວຍໃຫ້ຂໍ້ມູນເຣື່ອງເຫຼົ້າແລະຢາເສບຕິດ (Alcohol and Drug Information Service) ທີ່ເບີ (02) 9361 8000(1800 422 599 toll free) ໂທຣໄດ້ຕລອດ 24 ຊົ່ວໂມງ ເຈັດມື້ຕໍ່ອາທິດ. ທ່ານບໍ່ຈຳເປັນຕ້ອງໄດ້ບອກຊື່. ຖ້າທ່ານບໍ່ໝັ້ນໃຈເຣື່ອງການເວົ້າໂທຣະສັບເປັນພາສາອັງກິດ, ທ່ານສາມາດໂທຣຫາພແນກແປພາສາທາງໂທຣະສັບ ທີ່ ເບີ 131 450 ເພື່ອຂໍໃຫ້ເຂົາເຈົ້າໂທຣໃຫ້. ນອກຈາກນີ້ທ່ານຍັງສາມາດຕິດຕໍ່ຫາສູນອະນາມັຍຊຸມຊົນໃນເຂດທ້ອງຖິ່ນແລະບອກໃຫ້ເຂົາເຈົ້າສົ່ງທ່ານໄປຫາຜູ້ໃຫ້ຄຳແນະນຳດ້ານເຫຼົ້າແລະຢາເສບຕິດ. ນອກຈາກນີ້ແລ້ວ ທ່ານຍັງຈະຕ້ອງມີເຣື່ອງໄດ້ຄຶດໜັກອີກຫຼາຍເຣື່ອງ. ຂໍໃຫ້ພິຈາຣະນາເຣື່ອງທີ່ກ່າວຂ້າງລຸ່ມນີ້:

ເປັນຫຍັງຄົນໜຸ່ມຈຶ່ງໃຊ້ຢາເສບຕິດຜິດກົດໝາຍ? ສ່ວນຫຼາຍແລ້ວເຫດຜົນກໍແມ່ນອັນດຽວກັບເຫດຜົນທີ່ວ່າເປັນຫຍັງຜູ້ໃຫຍ່ຈຶ່ງໃຊ້ຢາເສບຕິດທີ່ຖືກຕ້ອງຕາມກົດໝາຍເຊັ່ນຢາສູບແລະເຫຼົ້ານັ້ນເອງ - ເພາະວ່າເຂົາເຈົ້າຕ້ອງການພັກຜ່ອນ, ມີຄວາມເບີກບານມ່ວນຊື່ນແລະເຂົ້າກັບສັງຄົມຂອງກຸ່ມເຂົາເຈົ້າໄດ້. ນອກຈາກນີ້ ຍັງເປັນສິ່ງສຳຄັນທີ່ເຮົາຕ້ອງຈຳໄວ້ວ່າເຖິງແມ່ນວ່າຢາສູບແລະເຫຼົ້າເປັນຢາເສບຕິດທີ່ຖືກຕ້ອງຕາມກົດໝາຍ ແຕ່ມັນສາມາດກໍ່ໃຫ້ເກີດບັນຫາດ້ານສຸຂພາບໄດ້ຫຼາຍກວ່າຢາເສບຕິດທີ່ຜິດກົດໝາຍເສັຍອີກ. ບາງທີ ຄົນໜຸ່ມ ອາດໃຊ້ຢາເສບຕິດຍ້ອນວ່າເຂົາເຈົ້າມີຄວາມຢາກຮູ້ຢາກເຫັນຢາກທົດລອງສິ່ງໃໝ່ໆ ຫຼືບາງທີກໍອາດຍ້ອນວ່າເຂົາເຈົ້າມີບັນຫາຢ່າງໃດຢ່າງນຶ່ງ - ເຊັ່ນວ່າເຂົາເຈົ້າອາດມີຄວາມກົດດັນເຣື່ອງໂຮງຮຽນ, ເຂົາເຈົ້າອາດຮູ້ສຶກວ່າຕົນເອງເຂົ້າກັບຄົນໜຸ່ມອື່ນໆບໍ່ໄດ້, ຫຼືເຂົາເຈົ້າອາດຮູ້ສຶກວ່າຕົນເອງດ້ອຍຄຸນຄ່າຫຼືມີປົມດ້ອຍດ້ານໃດດ້ານນຶ່ງ. ນອກຈາກນີ້ ຂໍໃຫ້ທ່ານຈົ່ງຮັບຮູ້ຄວາມຈິງທີ່ວ່າ ສັງຄົມທີ່ລູກໆເຮົາເຕີບໃຫຍ່ຂຶ້ນມານັ້ນແຕກຕ່າງກັນຫຼາຍກັບສັງຄົມທີ່ພໍ່ແມ່ເຂົາເຈົ້າເຕີບໃຫຍ່ຂຶ້ນມາ. ສັງຄົມປັດຈຸບັນເປັນສັງຄົມທີ່ຄົນເຮົາຄຸ້ນເຄີຍຕໍ່ການຕອບສນອງຄວາມຕ້ອງການຂອງຕົນເອງໄດ້ຢ່າງວ່ອງໄວທັນໃຈ - ເມື່ອຄົນເຮົາເກີດຄວາມເບື່ອໜ່າຍຂຶ້ນມາເຮົາກໍສາມາດເປີດເບິ່ງໂທຣະທັດປຸບແລະໄດ້ຮັບຄວາມບັນເທີງປັບໂລດ, ຖ້າເຮົາຮູ້ສຶກເຈັບຂຶ້ນມາເຮົາກໍກິນຢາບັນເທົາຄວາມເຈັບໄດ້ໂລດ, ຖ້າເຮົາເກີດກົດດັນຂຶ້ນມາ ກໍມີຢາເສບຕິດທີ່ຖືກຕ້ອງຕາມກົດໝາຍເຊັ່ນຢາສູບແລະເຫຼົ້າ - ຫຼືຢາເສບຕິດທີ່ຜິດກົດໝາຍເຊັ່ນກັນຊາ ໄວ້ຄອຍຕອບສນອງຄວາມຕ້ອງການໄດ້ສເມີ - ເພື່ອເຮັດໃຫ້ເຮົາຮູ້ສຶກດີຂຶ້ນ.

ແມ່ນຫຍັງກັນແທ້ທີ່ທ່ານຢ້ານກ່ຽວກັບການໃຊ້ຢາເສບຕິດ? ເປັນຍ້ອນທ່ານຄຶດວ່າລູກອາດຕາຍຍ້ອນໃຊ້ຢາເກີນຂນາດຫຼືວ່າຢ້ານຢາເສບຕິດຈະທຳລາຍສຸຂພາບເຂົາເຈົ້າ? ຫຼືວ່າເປັນຍ້ອນທ່ານຄຶດວ່າມັນຈະມີຜົນກະທົບຕໍ່ການຮຽນຫຼືວຽກການເຂົາເຈົ້າ? ທ່ານຢ້ານວ່າລູກອາດມີບັນຫາກັບຕຳຣວດຫຼືວ່າການໃຊ້ຢາເສບຕິດນີ້ຈະນຳໄປສູ່ການໃຊ້ຢາທີ່ຮ້າຍແຮງຂຶ້ນ? ເມື່ອທ່ານໃຈເຢັນລົງແດ່ແລ້ວ ຈົ່ງພຍາຍາມຖາມໃຫ້ຮູ້ຕື່ມຈາກລູກວ່າເຂົາເຈົ້າໃຊ້ຢາແບບໃດ - ໃຊ້ຫຼາຍປານໃດແລະກັບໃຜ? ອາດເປັນໄປໄດ້ວ່າລາວເຄີຍທົດລອງຢາເສບຕິດພຽງ ແຕ່ຄັ້ງດຽວເທົ່ານັ້ນ. ຄົນໜຸ່ມຫຼາຍຄົນເຄີຍທົດລອງໃຊ້ຢາເສບຕິດຜິດກົດໝາຍແຕ່ບໍ່ຕິດ. ຈົ່ງບອກກັບລູກວ່າທ່ານມີຄວາມເປັນຫ່ວງໃນເຣື່ອງການໃຊ້ຢາເສບຕິດແລະຢາກຊ່ວຍກັນແກ້ໄຂ. ໃຫ້ຖາມເບິ່ງວ່າລາວຢາກໄປຫາຜູ້ໃຫ້ຄຳແນະນຳເຣື່ອງຕິດ ເຫຼົ້າແລະຢາເສບຕິດບໍ.

ພໍ່ແມ່ບາງຄົນອາດຕັ້ງຄຳຖາມວ່າ "ແຕ່ວ່າຖ້າເຮົາຂູ່ດ້ວຍການທຳໂທດຫຼືຫ້າມບໍ່ໃຫ້ເຂົາອອກເຮືອນ ມັນກໍຄວນເຮັດໃຫ້ເຂົາເຊົາຢາໄດ້?" ຄຳຕອບກໍຄືວ່າ ການກະທຳດັ່ງກ່າວມັກບໍ່ໄດ້ຜົນ. ຄວາມຈິງມີຢູ່ວ່າບໍ່ມີຫຍັງທີ່ພໍ່ແມ່ເວົ້າຫຼືກະທຳຈະເຮັດໃຫ້ຄົນໜຸ່ມເຊົາຢາ. ໃນຖານະພໍ່ແມ່ສິ່ງທີ່ຈະເຮັດໃຫ້ໄດ້ຜົນດີທີ່ສຸດກໍຄືການສະແດງອອກເຖິງຄວາມຮັກຕໍ່ລູກ ແລະເຮົາພ້ອມສເມີທີ່ຈະຮັບຟັງບັນຫາຂອງເຂົາເຈົ້າ. ຖ້າເຮົາໃຊ້ວິທີອັດປະຕູຕັນເຂົາ ກໍຍິ່ງມີແນວໂນ້ມວ່າເຂົາເຈົ້າຈະໃຊ້ຢາເສບຕິດອີກ. ຖ້າເຮົາໃຊ້ວິທີເປີດປະຕູໃຫ້ກວ້າງຢູ່ສເມີ ໂອກາດທີ່ລູກຈະມາຫາເຮົາແລະຂໍໃຫ້ພໍ່ແມ່ຊ່ວຍເພື່ອອອກຢາເສບຕິດກໍຈະມີຫຼາຍຂຶ້ນ.